ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ
ຄະນະຊີ້ນຳພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ແຫ່ງຊາດ(ຄພທຊ)
ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ເລກທີ: 1509 / ທລຍ.11

ບົດບັນທຶກຊ່ວຍຈຳກ່ຽວກັບການປະສານງານ ແລະ ການຮ່ວມມືລະຫ່ວາງ ກະຊວງ ໂຍທາທິການແລະຂົນສົ່ງ(ຍທຂ) ກັບ ກອງທຶນຫລຸດຜ່ອນຄວາມທຸກຍາກ(ທລຍ)

ເພື່ອໃຫຮັບປະກັນໄດ້ມາດຕະຖານດ້ານເຕັກນິກ, ຄວາມຍືນຍົງ ແລະ ປອດໄພ ຂອງການກໍ່ສ້າງພື້ນຖານໂຄງລ່າງທາງຊົນນະບົດໃນຂັ້ນກຸ່ມບ້ານ ບ່ອນທີ່ ທລຍ ກຳລັງຈັດຕັ້ງປະຕິບັດຢູ່ນັ້ນ, ກະຊວງໂຍທາທິການ ແລະ ຂົນສົ່ງ(ຍທຂ) ແລະ ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ໄດ້ຮ່ວມ ກັນເຊັນຂໍ້ຕົກລົງ ພາຍໄຕ້ການຊີ້ນຳຂອງຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (ຄພທຊ) ກ່ຽວກັບມາດຕະຖານເຕັນນິກ ແລະ ການຮ່ວມມືສະບັບນີ້ ແນ່ໃສ່ປະກັນໃຫ້ມາດຕະຖານເຕັກນິກ ກ່ຽວກັບທາງຊົນນະບົດ(ທາງທະລຸ) ໄດ້ຖືກນຳໃຊ້ຢ່າງຖືກຕ້ອງ ແລະ ເຮັດໃຫ້ແຜນການແກ້ໄຂຄວາມທຸກຍາກຂອງປະເທດ ຊຶ່ງເປັນບູລິມະສິດອັນສຳຄັນຂອງລັດຖະບານ ໄດ້ຖືກຈັດຕັ້ງປະຕິບັດ.

ບົນພື້ນຖານການກຳນົດບຸລິມະສິດອັນຈຳເປັນຂອງຊຸມຊົນ, ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ໄດ້ຕອບສະໜອງດ້ານພື້ນຖານໂຄງລ່າງໃຫ້ແກ່ກຸ່ມບ້ານ (ເຊັ່ນ:ວຽກງານ ໂຍທາທິການ ແລະ ຂົນສົ່ງ, ສາທາລະນາສຸກ, ສຶກສາທິການ, ກະສິກຳ-ປ່າໄມ້ ແລະ ນຳ້ສະອາດ). ການກຳນົດເສັ້ນທາງຊົນນະບົດທີ່ເປັນເສັ້ນທາງເຊື່ອມຕໍ່ລະຫ່ວາງບ້ານຫາບ້ານ, ບ້ານຫາກຸ່ມບ້ານ ແລະ ກຸ່ມບ້ານຫາບ້ານ ແລະ ການຕິດຕໍ່ພົວພັນລະຫ່ວາງພາຍໃນບ້ານເອງ (ມາດຕະຖານທາງທີ່ເໝາະສົມຈະນຳໃຊ້ແມ່ນທາງຊັ້ນ 8 ຫາ ຊັ້ນ 11 ຕາມຄວາມຈຳເປັນຂອງແຕ່ລະທ້ອງຖິ່ນ). ໃນປະຈຸບັນ, ກະຊວງ ຍທຂ ແມ່ນກຳລັງສະເໜີອະນຸມັດຜ່ານມາດຕະຖານທາງຊົນນະບົດ ຢ່າງເປັນທາງການ. ພ້ອມກັນນັ້ນ, ກະຊວງ ຍທຂ ແລະ ທລຍ ກໍ່ໄດ້ຕົກລົງຮ່ວມກັນກ່ຽວກັບທາງຊົນນະບົດ (ທາງຊົນນະບົດທີ່ມີປະລິມານການສັນຈອນຕຳ່) ຊຶ່ງທາງດັ່ງກ່າວມີໜ້າທາງແລ່ນໄດ້ບໍ່ເກີນ 3 ແມັດ.

ບົດບັນທຶກຊ່ວຍຈຳສະບັບນີ້ ແມ່ນໄດ້ກວາມເອົາວຽກສຳຫລວດອອກແບບ, ການຈັດຕັ້ງປະຕິບັດ, ຕິດຕາມປະເມີນຜົນ, ບຸລະນະຮັກສາ ສ້ອມແປງ ແລະ ຝຶກອົບຮົມ. ລວມທັງວຽກງານການຮ່ວມມື, ການປະສານງານ ແລະ ການລາຍງານໃນຂັ້ນສູນກາງ , ຂັ້ນແຂວງ ແລະ ຂັ້ນເມືອງ / ຂັ້ນກຸ່ມບ້ານ.

1. ກະຊວງ ຍທຂ ໄດ້ມອບໝາຍໃຫ້ພະແນກທາງຊົນນະບົດ,ກົມຂົວທາງເປັນຜູ້ປະສານງານໃນຂັ້ນສູນກາງເພື່ອເຮັດວຽກຮ່ວມກັບ ທລຍ ໂດຍສະເພາະແມ່ນການພັດທະນາທາງຊົນນະບົດພາຍໄຕ້ກອບຂອງ ທລຍ. ພະແນກທາງຊົນນະບົດຈະເປັນຜູ້ປະສານງານແລະຊ່ວຍໃຫ້ ທລຍ ພັດທະນາທາງຊົນນະບົດ. ກະຊວງ ຍທຂ ຈະໄດ້ອະນຸມັດກ່ຽວກັບຍຸດທະສາດການຂົນສົ່ງຊົນນະບົດ, ໂດຍເອົາໂຄງການທາງຊົນນະບົດທີ່ ທລຍ ໃຫ້ການສະໜັບສະໜູນເຂົ້າແຜນປົກປັກຮັກສາແລະສ້ອມແປງ.

2. ເພື່ອຮັບປະກັນໃຫ້ແກ່ການຮ່ວມມື ແລະ ການປະສານງານຢູ່ຂັ້ນສູນກາງໂດຍສະເພາະຂັ້ນກະຊວງ (ກະຊວງ ຍທຂ), ຈະຕ້ອງໄດ້ສ້າງລະບຽບຢ່າງເປັນທາງການສຳລັບທາງຊົນນະບົດ ເພື່ອເຮັດໃຫ້ການຮ່ວມມືລະຫວ່າງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ແລະ ເມືອງ ກັບ ທລຍ ເກີດຜົນປະໂຫຍດ. ຂັ້ນສູນກາງ(ຂັ້ນກະຊວງ) ຈະໄດ້ຮັບລາຍງານກ່ຽວກັບໂຄງການທາງຊົນນະບົດ ໃນຂັ້ນກຸ່ມບ້ານ ໂດຍຜ່ານຂັ້ນຕອນການວາງແຜນແບບມີສ່ວນຮ່ວມຂອງຊຸມຊົນ ພາຍຫລັງທີ່ໄດ້ຮັບການເຫັນດີ ແລະ ຢັ້ງຢືນຄືນຈາກກອງປະຊຸມຂັ້ນເມືອງ (District Validation Meeting). ໃນລະດັບຂັ້ນສູນກາງ ຈະໄດ້ພະຍາຍາມຮ່ວມມືກັນຢ່າງໄກ້ສິດ ລະຫ່ວາງກະຊວງ ຍທຂ ກັບ ທລຍ ເພື່ອຊຸກຍູ້ໃຫ້ແຕ່ລະທ້ອງການຢູ່ຂັ້ນແຂວງ ແລະ ຂັ້ນເມືອງຮ່ວມມືກັນໃຫ້ຫລາຍທີ່ສຸດ. ຖ້າເປັນໄປໄດ້, ຂັ້ນສູນກາງຈະເປັນຜູ້ປະ

ສານງານຮ່ວມມືກັນ ໃນການຈັດແບ່ງທຶນໂດຍຜ່ານຜູ້ໃຫ້ທຶນໄປຫາເມືອງ / ກຸ່ມບ້ານເປົ້າໝາຍຂອງ ທລຍ. ພະແນກທາງຊົນນະບົດ ກົມ ຂົວທາງ ກະຊວງໂຍທາທິການ ແລະ ຂົນສົ່ງ ແມ່ນຈຸດໃຈກາງ ເພື່ອປຶກສາຫາລືໃນດ້ານວິຊາການ. ກະຊວງ ຍທຂ ກໍ່ແມ່ນສະມາຊິກສະ ພາຂອງຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (ຄພທຊ), ມີຜູ້ໜ້າປະຈຳເຂົ້າຮ່ວມປະຊຸມເປັນປົກກະຕິ ໂດຍສະເພາະ ແມ່ນການຮ່ວມມື ແລະ ປະສານງານກ່ຽວກັບວຽກງານພັດທະນາຊົນນະບົດ.

3. ເພື່ອຮັບປະກັນການຮ່ວມມື ແລະ ປະສານງານໃນຂັ້ນແຂວງ ຊຶ່ງແມ່ນພະແນກ ຍທຂ ເປັນຕົວແທນໃຫ້ແກ່ຂະແໜງໂຍທາທິການ ແລະ ຂົນສົ່ງເຂົ້າຮ່ວມກອງປະຊຸມວາງແຜນໃນຂັ້ນເມືອງເພື່ອຮັບປະກັນການນຳໃຊ້ມາດຕະຖານເຕັກນິກແລະໃຫ້ເສັ້ນທາງເຊື່ອມຕໍ່ກັບລະບົບ ເສັ້ນທາງຂອງແຂວງແລະເມືອງ. ພະແນກ ຍທຂ ຈະໃຫ້ການຊ່ວຍເຫລືອທາງດ້ານເຕັກນິກແກ້ ທລຍ ໃນການຄຸ້ມຄອງສັນຍາການ ກໍ່ສ້າງ,ຄວບຄຸມຄຸນນະພາບແລະຮັບປະກັນທາງສະພາບແວດລ້ອມແລະສັງຄົມໂດຍອີງຕາມຄູ່ມືຈັດຕັ້ງປະຕິບັດອະນຸມັດໂດຍກະຊວງ ຍທຂ ໃນໄລຍະຈັດຕັ້ງປະຕິບັດ.ພະແນກ ຍທຂ ຈະໄດ້ເຂົ້າຮ່ວມລົງຕິດຕາມ ແລະ ມອບຮັບໂຄງການທາງຊົນນະບົດທີ່ສຳເລັດໃນ ຂັ້ນກຸ່ມບ້ານ.ພະແນກ ຍທຂ ແຂວງ ຈະເປັນຜູ້ຊຸກຍູ້ໃຫ້ຫ້ອງການ ຍທຂ ເມືອງຮ່ວມມືກັບ ທລຍ ໃນການຜັກດັນການຈັດຕັ້ງປະຕິ ບັດໂຄງການຍ່ອຍໄປຕາມມາດຕະຖານທີ່ໄດ້ຕົກລົງກັນໄວ້. ພະແນກ ຍທຂ ຈະໄດ້ແຕ່ງຕັ້ງຜູ້ປະສານງານຜູ້ນຶ່ງເພື່ອເຮັດວຽກຮ່ວມກັບ ທລຍ ໃນລະດັບແຂວງ. ເອກະສານການປະມູນຈະໄດ້ກະກຽມໃນຂັ້ນເມືອງ ແລະ ມອບໃຫ້ຫ້ອງການ ຍທຂ ເມືອງມີຄວາມເຫັນກ່ອນທີ່ ຈະເລີ່ມປະກາດຂາຍຊອງ. ຜູ້ປະສານງານ ຍທຂ ຂັ້ນແຂວງຈະຕ້ອງເປັນເຈົ້າການເຂົ້າຮ່ວມຝຶກອົບຮົມທີ່ຈັດໂດຍ ທລຍ ເພື່ອຮັບປະກັນ ໃຫ້ແກ່ການຝຶກອົບຮົມເກີດປະສິດຕິຜົນສູງສຸດ. ທລຍ ແລະ ຫ້ອງການ ຍທຂ ເມືອງຈະໄດ້ລວບລວມໂຄງການທາງຊົນນະບົດແລະສິ່ງ ໃຫ້ພະແນກ ຍທຂ ເພື່ອນຳໃຊ້ເຂົ້າໃນກະກຽມແຜນປະຈຳປີແລະແຜນປົກປັກຮັກສາໃຫ້ຕໍ່ເນື່ອງ

4. ເພື່ອຮັບປະກັນການຮ່ວມມື ແລະ ປະສານງານໃນຂັ້ນເມືອງ / ຂັ້ນກຸ່ມບ້ານດຳເນີນຢ່າງກົມກຽວກັນ, ຫ້ອງການ ຍທຂ ຂັ້ນເມືອງ ຈະໄດ້ ເຂົ້າຮ່ວມກອງປະຊຸມວາງແຜນໃນຂັ້ນກຸ່ມບ້ານ ທີ່ຈັດໂດຍ ທລຍ ແລະ ການປຶກສາຫາລືໃນຂັ້ນກຸ່ມບ້ານ ກ່ຽວກັບບຸລິມະສິດ ແລະ ຄວາມ ເປັນໄປໄດ້ໃນການສຳຫລວດ-ອອກແບບ, ການປະກອບສ່ວນຂອງຊຸມຊົນ, ການຄິດໄລ່ລາຄາຫົວໜ່ວຍ ແລະ ຂໍ້ມູນອື່ນໆທີ່ຈຳເປັນ ຂອງ ທາງຊົນນະບົດ. ຫ້ອງການ ຍທຂ ເມືອງ ແລະ ແຂວງຮັບຜິດຊອບໃນການອອກແບບ, ວາງແຜນພ້ອມທັງໃຫ້ການຝຶກອົບຮົມກ່ຽວກັບການ ຄຸ້ມຄອງແລະປົກປັກຮັກສາທາງຊົນນະບົດໃຫ້ແກ່ກຸ່ມບ້ານ ແລະ ຊຸມຊົນ.

5. ວິທີການວາງແຜນຂອງ ທລຍ ໄດ້ກຳນົດເອົາກຸ່ມບ້ານເປັນເປົ້າໝາຍ ເພື່ອແນໃສ່ພັດທະນາການມີສ່ວນຮ່ວມຂອງຊຸມຊົນ ແລະ ເຂົ້າ ເຖິງພື້ນຖານໂຄງລ່າງ. ກຸ່ມບ້ານນຶ່ງຈະໄດ້ວາງແຜນງົບປະມານບຸລິມະສິດເປັນໄລຍະ 4 ປີ. ກອງປະຊຸມຜ່ານແຜນງົບປະມານຂອງກຸ່ມ ບ້ານ ຈະໄດ້ຈັດຂຶ້ນພາຍໃຕ້ການເປັນປະທານຂອງທ່ານຮອງເຈົ້າເມືອງ ຊຶ່ງມີຕົວແທນຈາກກຸ່ມບ້ານ, ຈາກ ຄທພຊ, ຈາກບັນດາພະແນກ ການອ້ອມຂ້າງແຂວງ ແລະ ຫ້ອງການຂະແໜງການເມືອງ ພ້ອມທັງພາກສ່ວນເອກະຊົນອື່ນໆທີ່ສົນໃຈເຂົ້າຮ່ວມ ໃນການຄັດເລືອກໂຄງ ການຍ່ອຍດ້ານໂຍທາທິການ ແລະ ຂົນສົ່ງ ຂັ້ນສຸດທ້າຍສຳລັບກຸ່ມບ້ານ. ເມື່ອແຜນການລົງທຶນຂັ້ນກຸ່ມບ້ານໄດ້ຖືກຮັບຮອງແລ້ວ, ຂັ້ນຕອນ ການຈັດຊື້ຈັດຈ້າງກໍ່ໄດ້ເລີ່ມຈັດຕັ້ງປະຕິບັດ ບົນພື້ນຖານການສຳຫລວດ ແລະ ອອກແບບທີ່ໄດ້ປະສານສົມທົບກັບຫ້ອງການ ຍທຂ. ທລຍ ຈະໃຫ້ການສະໜັບສະໜູນແກ່ການສ້າງຄວາມເຂັ້ມແຂງໃຫ້ອຳນາດການປົກຄອງ ແລະ ຂະແໜງການທີ່ກ່ຽວຂອງ ໂດຍສະເພາະແມ່ນ ຂະແໜງ ຍທຂ ໃນວຽກງານຕິດຕາມປະເມີນຜົນ ແລະ ການປົກປັກຮັກສາໂຄງການຍ່ອຍດ້ານທາງຊົນນະບົດຂັ້ນກຸ່ມບ້ານ ໃຫ້ມີຄວາມ ຍືນຍົງ. ກ່ຽວກັບວຽກງານຝຶກອົບຮົມ ທລຍ ຈະຈ່າຍອັດຕາກິນ, ຄ່າເດີນທາງ, ຄ່າອຸປະກອນການສິດສອນໃຫ້ຂະແໜງການໃນການຈັດ ຝຶກອົບຮົມໃນແຕ່ລະຄັ້ງ. ສຳລັບວຽກງານຕິດຕາມ ແລະ ຈັດກອງປະຊຸມທີ່ຕິດພັນກັບໂຄງການຍ່ອຍ ທລຍ ກໍ່ຈະຈ່າຍຄ່າອັດຕາກິນ ແລະ ຄ່າເດີນທາງໃຫ້. ແຕ່ມີບາງກໍລະນີ ທລຍ ກໍ່ຈະໄດ້ຈ່າຍຄ່າບໍລິການໃຫ້ຂະແໜງ ຍທຂ ເຖິງແມ່ນວ່າເປັນວຽກຂອງ ຂະແໜງການກໍ່ຕາມ ໂດຍສະເພາະແມ່ນການບໍລິການ (ເຊັ່ນ: ອັດຕາກິນສຳລັບລົງສຳຫລວດເພື່ອອອກແບບ, ລົງປະເມີນຜົນດ້ານວິຊາການ, ຄຸມງານກໍ່ສ້າງ ແລະ ຄຸ້ມຄອງປົກປັກຮັກສາ), ໂດຍອີງຕາມລະບຽບການຂອງຂະແໜງການ ແລະ ມູນຄ່າຂອງໂຄງການຍ່ອຍທັງໝົດ.

ຫົວຂໍ້ອື່ນໆທີ່ຈະໄດ້ຕົກລົງກັນ

6. ລະບົບການລາຍງານ ແລະ ສະໜອງຂໍ້ມູນຂ່າວສານອື່ນໆ ແມ່ນເປັນພາກສ່ວນນຶ່ງທີ່ນອນຢູ່ໃນຂໍ້ຕົກລົງສະບັບນີ້. ທລຍ ຈະໄດ້ລາຍງານໃຫ້ ຄທພຊ ໂດຍໄວພາຍຫລັງທີ່ໄດ້ສະຫລຸບກອງປະຊຸມຜ່ານແຜນກ່ຽວກັບໂຄງການທີ່ໄດ້ອະນຸມັດທັງໝົດໃຫ້ແຕ່ລະຂະແໜງການ. ລວມທັງ ໂຄງການກ່ຽວກັບຂະແໜງ ຍທຂ ໂຄງການເຫລົ່ານັ້ນຈະໄດ້ເອົາເຂົ້າໃນແຜນການຂອງເມືອງເພື່ອວາງແຜນໃນປີຕໍ່ໄປ.

7. ຫ້ອງການ ຍທຂ ເມືອງ ຈະໄດ້ລາຍງານໃຫ້ພະແນກ ຍທຂ ແຂວງຊາບ ກ່ຽວກັບໂຄງການທັງໝົດປະຈຳປີ ແລະ ໂຄງການລວມສຳລັບແຜນການ 4 ປີ ທີ່ໄດ້ຖືກຮັບຮອງຈາກກອງປະຊຸມຜ່ານແຜນໂຄງການຂັ້ນເມືອງ (DVM) ແລະ ສຳເນົາສິ່ງໃຫ້ ກະຊວງ ຍທຂ ແລະ ຄທພຊ ຫ້ອງການ ຍທຂ ເມືອງຈະໄດ້ລາຍງານໃຫ້ ຍທຂ ແຂວງທຸກໆ 6 ເດືອນ ກ່ຽວກັບຄວາມຄືບໜ້າຂອງວຽກ, ພ້ອມກັນນັ້ນ ກໍ່ຈະໄດ້ລາຍງານວຽກໃຫ້ແກ່ອຳນາດການປົກຄອງເມືອງໃນແຕ່ລະເດືອນ.

8. ຂໍ້ມູນກ່ຽວກັບໂຄງການຍ່ອຍທີ່ໄດ້ອະນຸມັດໃນກອງປະຊຸມຜ່ານແຜນ(DVM) ລວມມີມູນຄ່າໂຄງການ, ກຳນົດເວລາການກໍ່ສ້າງ, ການປະກອບສ່ວນ, ສະເໜີເພື່ອສືບຕໍ່ໂຄງການ(ໃນບາງກໍລະນີ) ພ້ອມທັງຕາຕະລາງສະຫລຸບໂຄງການ ແລະ ຂໍ້ມູນອື່ນທີ່ເປັນປະໂຫຍດ.

9. ໃນຂະນະທີ່ລໍ່ຖ້າການອະນຸມັດການນຳໃຊ້ມາດຕະຖານທາງຊົນນະບົດຊັ້ນ 8 ຫາ ຊັ້ນ 11 ນັ້ນ, ທັງສອງຝ່າຍເຫັນດີ ແລະ ຕົກລົງໃຫ້ ທລຍ ກໍ່ສ້າງທາງຊົນນະບົດ (ທີ່ມີໜ້າທາງບໍ່ໃຫ້ເກີນກ່ວາ 3 ມ). ຖ້າຫາກເປັນໄປໄດ້ ກໍ່ຕ້ອງຮັບປະກັນໃນສິ່ງທີ່ໄດ້ຕົກລົງ ເພື່ອຄວາມປອດໄພ ແລະ ຄວາມຍືນຍົງ ເຊັ່ນ: ການຕິດຕັ້ງລະບົບລະບາຍນ້ຳໃຫ້ມີຄວາມເໝາະສົມ ແລະ ອື່ນໆ.

10. ເຖິງແມ່ນວ່າ ທລຍ ບໍ່ໄດ້ມີສ່ວນຮ່ວມໃນການກໍ່ສ້າງທາງລະດັບເມືອງ,ສ້ອມແປງເປັນຈຸດຕາມເສັ້ນທາງຂອງເມືອງ (ທາງຊັ້ນ 7) ໃນກໍ່ລະນີ ມັນມີຜົນປະໂຫຍດໃຫ້ກຸ່ມບ້ານ / ການລົງທຶນຂອງ ທລຍ ຢູ່ຂັ້ນບ້ານ ກໍ່ສາມາດຮັບຮອງເອົາໄດ້ເປັນກໍ່ລະນີພິເສດ, ແຕ່ຕ້ອງໄດ້ຢັ້ງຢືນວ່າເປັນມາດຕະຖານຂອງທາງຊັ້ນ 7 ແທ້.

11.ເພື່ອໃຫ້ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ຮັບປະກັນໃຫ້ໄດ້ມາດຕະຖານສູງສຸດສຳລັບການກໍ່ສ້າງທາງຊົນນະບົດ, ທັງສອງຝ່າຍເຫັນດີ ແລະ ຕົກລົງກັນດັ່ງນີ້ຄື:

ກ. ພາຍຫລັງກອງປະຊຸມຜ່ານແຜນການຂັ້ນເມືອງ (DVM), ຫ້ອງການ ຍທຂ ເມືອງ ແລະ ທລຍ ຈະມີກອງປະຊຸມປຶກສາຫາລືກ່ຽວກັບ ຄວາມເປັນໄປໄດ້ໃນການລົງປະເມີນ, ສຳຫລວດ, ອອກແບບ ແລະ ກຳນົດລາຄາໂຄງການຍ່ອຍ, ຖ້າວ່າ ຫ້ອງການ ຍທຂ ເມືອງມີຄວາມສາມາດໃນການຄິດໄລ່, ສຳຫລວດ ແລະ ອອກແບບ. ແຕ່ໃນທາງກົງກັນຂ້າມ ຫ້ອງການ ຍທຂ ເມືອງຈະຕ້ອງເຮັດໜັງສືຫາແຂວງ ເພື່ອສະເໜີໃຫ້ແຂວງມາຊ່ວຍໃນການສຳຫລວດ ແລະ ອອກແບບ. ຫ້ອງການ ທລຍ ຈະຮັບຜິດຊອບກ່ຽວກັບຄ່າອັດຕາກິນ ແລະ ຄ່າເດີນທາງໃຫ້ ຍທຂ ແຂວງໃນການລົງສຳຫລວດ ແລະ ອອກແບບ.

ຂ. ເມື່ອຫ້ອງການ ຍທຂ ເມືອງໄດ້ອອກແບບ ແລະ ຄິດໄລ່ຕາມມາດຕະຖານທີ່ໄດ້ຕົກລົງກັນແລ້ວ, ຈະຕ້ອງສົ່ງແບບໃຫ້ ທລຍ ເມືອງພ້ອມທັງລາຄາໂຄງການຍ່ອຍ ແລະ ທລຍ ເມືອງຈະໄດ້ສົ່ງຕໍ່ໃຫ້ແຂວງ ແລະ ສູນກາງ. ທລຍ ສູນກາງຈະເປັນຜູ້ກວດກາການອອກແບບ ແລະ ລາຄາການກໍ່ສ້າງບົນພື້ນຖານຫົວໜ່ວຍລາຄາຂອງກະຊວງ ຍທຂ ທີ່ໄດ້ກຳນົດ ໃຫ້. ລາຄາຫົວໜ່ວຍ ຈະໄດ້ປັບປຸງຢ່າງເປັນປະຈຳ ເພື່ອໃຫ້ສອດຄ່ອງກັບລາຄາທ້ອງຕະຫລາດໃນແຕ່ລະໄລຍະ.

ຄ. ເມື່ອການອອກແບບ ແລະ ຄິດໄລ່ລາຄາສຳເລັດແລ້ວ,ຈະຕ້ອງໄດ້ຈັດກອງປະຊຸມຂັ້ນກຸ່ມບ້ານ ກັບ ຫ້ອງການ ຍທຂ ເມືອງ ແລະ ຕົວແທນ ທລຍ ເມືອງ ເພື່ອປະເມີນຄວາມເປັນໄປໄດ້ທາງດ້ານການອອກແບບ ແລະ ລາຄາສຳລັບໂຄງການທາງຊົນນະບົດ.

ງ. ການປຶກສາຫາລືລະຫວ່າງ ຫ້ອງການ ຍທຂ ເມືອງ, ທລຍ ແລະ ກັບຕົວແທນກຸ່ມບ້ານ ຈະຕ້ອງໄດ້ເປັນເອກະພາບກັນທັງສາມຝ່າຍ ກ່ອນກອງປະຊຸມຜ່ານແຜນການຂັ້ນເມືອງ (DVM).

ຈ. ທີມງານບໍລິຫານໂຄງການຈະລາຍງານໃຫ້ຜູ້ໃຫ້ທຶນ ເພື່ອຂໍອະນຸມັດໂຄງການຍ່ອຍຈາກກອງປະຊຸມຕັດສິນ ແລະ ດຳເນີນການຕາມຂັ້ນຕອນການປະມູນ. ແຜນການຈັດຊື້ຈະໄດ້ກະກຽມ ແລະ ສົ່ງໃຫ້ທີມງານທະນາຄານໂລກເພື່ອເປັນຂໍ້ມູນໃນການຕິດຕາມ.

ສ. ທລຍ ແລະ ຍທຂ ເມືອງຈະໄດ້ຊ່ວຍກຸ່ມບ້ານໃນຂັ້ນຕອນການຈັດຊື້ຈັດຈ້າງ ຈະໄດ້ເລີ້ມໂດຍມີການປະກາດຂາຍຊອງໃນຂັ້ນກຸ່ມບ້ານແລະການເປີດຊອງຈະໄດ້ເປີດຊ້ອງໜ້າຊຸມຊົນ,ມາດຕະການໃນການເປີດຊອງຈະຕ້ອງໄດ້ກຳນົດອອກວ່າຊອງປະມູນສາມາດຮັບເອົາໄດ້ຢູ່ໃສ່,ກຳນົດວັນທີເປີດຊອງ,ສະຖານທີ່ແລະຕ້ອງແຈ້ງສະຖານທີ່ຈະເປີດຊອງໃຫ້ຄະນະກຳມະການຂັ້ນເມືອງໄດ້ຮັບຮູ້ກ່ອນມີການເປີດຊອງ.

ຊ. ສຳລັບວັນທີຈະຢື່ນຊອງປະມູນ, ຈະເປັນວັນດຽວກັນກັບວັນທີຈະເປີດຊອງປະມູນ, ຄະນະກຳມະການປະມູນຂັ້ນເມືອງ (ຄກມ) ໂດຍແມ່ນ ທ່ານຮອງເຈົ້າເມືອງຈະເປັນປະທານກອງປະຊຸມ. ຕົວແທນກຸ່ມບ້ານຈະເປັນຜູ້ເປີດຊອງ, ໂດຍຊ້ອງໜ້າຕົວແທນຈາກແຕ່ລະຂະແໜງການ ລວມມີຂະແໜງ ຍທຂ, ທລຍ ແລະ ບໍລິສັດທີ່ມາຢື່ນຊອງປະມູນ. ບໍລິສັດ ຈະຕ້ອງໄດ້ລົງທະບຽນ, ເອກະສານທີ່ຈະຢື່ນ ລວມມີເອກະສານການປະມູນ, ເອກະສານມາດຕະຖານຕ່າງໆເຊັ່ນ: (ຄວາມສາມາດດ້ານການເງິນ,ປະສົບ ການ ແລະ ອື່ນໆ). ມາດຕະການດັ່ງກ່າວນີ້ຈະໄດ້ຂຽນໃສ່ກະດານ, ພ້ອມທັງ ຊື່ບໍລິສັດເຂົ້າປະມູນ ແລະ ຈຳນວນໂຄງການລວມທັງລາຄາສະເໜີ. ຂໍ້ມູນດັ່ງກ່າວຈະໄດ້ຂຽນລົງໃສ່ບົດບັນທຶກກອງປະຊຸມຢ່າງລະອຽດ ແລະ ເຊັນໂດຍບໍລິສັດທີ່ເຂົ້າປະມູນ.

ຍ. ໃນກອງປະຊຸມເປີດຊອງ, ປະທານກອງປະຊຸມຈະໄດ້ໃຫ້ຂໍ້ມູນກ່ຽວກັບເມືອງ ແລະ ເຊີນບໍລິສັດທີ່ສະນະການປະມູນເຂົ້າຮ່ວມປຶກສາຫາລືກ່ອນເລີ້ມລົງມືຈັດຕັ້ງປະຕິບັດ ໃນຂັ້ນກຸ່ມບ້ານ ເພື່ອຊຸກຍູ້ໃຫ້ບໍລິສັດເຂົ້າໃຈເຖິງຄວາມຫຍຸ້ງຍາກແຕ່ລະບັນຫາ ແລະ ສະເໜີໃຫ້ບໍລິສັດຮັບຮູ້ວ່າຂະແໜງ ຍທຂ ເປັນຜູ້ຮັບຜິດຊອບໃນການຕິດຕາມ,ກວດກາ ແລະ ຄວບຄຸມການກໍ່ສ້າງ.

ດ. ຄະນະກຳມະການເປີດຊອງປະມູນປະກອບມີການນຳຂອງເມືອງ, ຫ້ອງການ ຍທຂ ເມືອງ, ຂະແໜງການກ່ຽວຂອງ, ຕົວແທນກຸ່ມບ້ານ ແລະ ທລຍ ຈະໄດ້ຈັດລຳດັບການປະມູນອີງຕາມລາຄາສະເໜີ ແຕ່ບົນພື້ນຖານທາງດ້ານເຕັກນິກ ແລະ ຄຸນວຸດທິຂອງບໍລິສັດ, ເພື່ອໃຫ້ຖືກຕ້ອງຕາມລະບຽບການຈັດຊື້ ຂອງທະນາຄານໂລກ. ລາຍການດັ່ງກ່າວ ຈະໄດ້ສົ່ງໃຫ້ທີມງານບໍລິຫານໂຄງການ ທລຍ ສູນກາງແລ້ວ ສົ່ງໃຫ້ໜ່ວຍງານຈັດຊື້ເພື່ອກວດກາ ແລະ ໃຫ້ຄຳເຫັນໃນການປະເມີນ.

ຕ. ຍົກເວັ້ນໃນກໍລະນີ (ສະເໜີໃຫ້ທະນາຄານມີຄວາມເຫັນກ່ອນຈັດຕັ້ງປະຕິບັດ), ພາຍຫລັງທີ່ ທີມງານບໍລິຫານໄດ້ເຫັນດີໃນການຄັດເລືອກຜູ້ຊະນະ,ຈະຕ້ອງໄດ້ສົ່ງແຈ້ງການຫາກຸ່ມບ້ານ(ໂດຍສຳເນົາສົ່ງໃຫ້ທ່ານຮອງເຈົ້າເມືອງ), ສັນຍາການກໍ່ສ້າງຈະໄດ້ເຊັນຮ່ວມກັນລະຫວ່າງຜູ້ຮັບເໝົາ,ຕົວແທນກຸ່ມບ້ານ ແລະ ຫ້ອງການ ຍທຂ ເມືອງ. ກຸ່ມບ້ານມີໜ້າທີ່ຄຸ້ມຄອງສັນຍາການກໍ່ສ້າງທັງໝົດ.<u>ໝາຍເຫດ</u>:ແຕ່ລະແຂວງຈະໄດ້ຄັດເລືອກເອົາສອງໂຄງການເພື່ອສົ່ງໃຫ້ທີມງານທະນາຄານໂລກກວດກາກ່ອນການຈັດຕັ້ງປະຕິບັດ.ເມື່ອສອງໂຄງການດັ່ງກ່າວໄດ້ຮັບຮອງເປັນໂຄງການທີ່ໄດ້ຜ່ານການກວດກາແລ້ວ,ຕົວແທນກຸ່ມບ້ານຈະໄດ້ຮັບແຈ້ງການໃຫ້ດຳເນີນການເຊັນສັນຍາກັບຜູ້ຮັບເໝົາ.ທັງໝົດໂຄງການທີ່ໄດ້ຈັດຕັ້ງປະຕິບັດໄປແລ້ວທີມງານທະນາຄານໂລກຈະໄດ້ກວດກາດ້ວຍຮູບແບບຊຸ່ມຄັດ ເລືອກ, ວິທີການດັ່ງກ່າວນີ້ເອີ້ນວ່າ ການກວດກາພາຍຫລັງການຈັດຕັ້ງປະຕິບັດ.

ຖ. ໃບສະເໜີການເບີກຈ່າຍໃຫ້ຜູ້ຮັບເໝົາຈະຕ້ອງໄດ້ຮັບການຕົກລົງແລະຢັ້ງຢືນຈາກຫ້ອງການ ຍທຂ ເມືອງ ,ທລຍ ແລະຕົວແທນກຸ່ມບ້ານບົນພື້ນຖານຈຳ ນວນ ແລະ ບໍລິມາດທີ່ສຳເລັດ ແລະ ເຊັນເບີກຈ່າຍໂດຍຕົວແທນກຸ່ມບ້ານ.

ທ. ການຈ່າຍຄ່າພາສີອາກອນຂອງບໍລິສັດຈະຕອ້ງອິງໃສ່ຂໍ້ຕົກລົງລະຫວ່າງ ທລຍ ແລະ ກະຊວງ ການເງິນ(ກຊງ).

12. ການຄວບຄຸມຄຸນນະພາບ ແລະ ການຄຸ້ມຄອງນຳໃຊ້ສິ່ງກໍ່ສ້າງ ແມ່ນເປັນພາກສ່ວນນຶ່ງທີ່ສຳຄັນສຳລັບໂຄງການທີ່ ທລຍ ໃຫ້ການສະໜັບສະໜູນ, ວຽກງານສ້າງຄວາມເຂັ້ມແຂງ ແມ່ນຄວາມຈຳເປັນທີ່ຈະຕ້ອງໄດ້ປະເມີນຮ່ວມກັນລະຫ່ວາງ ທລຍ, ກັບຫ້ອງການ ຍທຂ ເມືອງ ແລະ ກັບຕົວແທນຂອງກຸ່ມບ້ານ.

13. ໃນໄລຍະການຈັດຕັ້ງປະຕິບັດໂຄງການຍ່ອຍ, ຫ້ອງການ ຍທຂ ເມືອງ ຈະເປັນຫລັກໃນການຕິດຕາມ ກວດກາຄວາມຄືບໜ້າ ແລະ ຄວບຄຸມຄຸນນະພາບຂອງໜ້າວຽກ. ທລຍ ຈະຊຸກຍູ້ໃຫ້ຕົວແທນກຸ່ມບ້ານໃນການຕິດຕາມ, ກວດກາ ແລະ ຮັບລາຍງານຈາກ ຫ້ອງການ ຍທຂ ເມືອງ. ທີມງານຈັດຕັ້ງປະຕິບັດ (ກຸ່ມບ້ານ) ຈະໄດ້ຮັບການຝຶກອົບຮົມທາງດ້ານປະເມີນຜົນທາງດ້ານຄຸນນະພາບ. ອີງຕາມມາດຕະຖານຂໍ້ກຳນົດໃນເອກະສານສັນຍາ,ຫ້ອງການ ຍທຂ ເມືອງ ແລະ ທລຍ ຈະໄດ້ສ້າງລະບົບຄວບຄຸມຄຸນນະພາບສຳລັບທາງ. ຜູ້ຮັບເໝົາຈະຕ້ອງຮັບປະກັນຄຸນນະພາບຂອງວັດສະດຸການກໍ່ສ້າງເຊັ່ນ:ການທົດລອງວັດສະດຸແລະການທົດລອງພາກສະໜາມ ຫ້ອງການ ຍທຂ ແລະ ທລຍ ຈະຕ້ອງໄດ້ເກັບມ້ຽນເອກະສານຢັ້ງຢືນກ່ຽວກັບການທົດລອງວັດສະດຸ,ການທົດລອງພາກສະໜາມ,ບໍລິມາດວຽກແລະແບບ ແຕ້ມຕ່າງໆໃນບ່ອນທີ່ປອດໄພເພື່ອໃຫ້ຜູ້ກວດສອບໃນຂັ້ນຕໍ່ໄປ.

14. ການກວດກາຄັ້ງສຸດທ້າຍຈະຕ້ອງໄດ້ຈັດຂຶ້ນໂດຍການເຂົ້າຮ່ວມຂອງ ພະແນກ ຍທຂ ແຂວງ ແລະ ເມືອງ, ຕົວແທນຂອງກຸ່ມບ້ານ ແລະ ທລຍ. ພະແນກ ຍທຂ ແຂວງ ຈະຕ້ອງໄດ້ເອົາໂຄງການທາງຊົນນະບົດເຂົ້າໃນແຜນການປົກປັກຮັກສາຂອງແຂວງ.

15. ທລຍ ມີນະ�โยบายໃຫ້ການສະໜັບສະໜູນກໍ່ສ້າງບຸກຄະລະກອນ ໂດຍ ຜ່ານຫ້ອງການ ຍທຂ ເມືອງ ດ້ານການຝຶກອົບຮົມໃຫ້ພະນັກງານລັດຂັ້ນເມືອງ ກ່ຽວກັບການປົກປັກຮັກສາເສັ້ນທາງຊົນນະບົດ, ການສຳຫລວດ ແລະ ອອກແບບ ຊຶ່ງພະນັກງານດັ່ງກ່າວ ຈະຕ້ອງເຮັດວຽກຢູ່ເມືອງຢ່າງໜ້ອຍ 3 ປີ ພາຍຫລັງທີ່ໄດ້ຮັບການຝຶກອົບຮົມແລ້ວ ເພື່ອແນໃສ່ສ້າງຄວາມເຂັ້ມແຂງໃຫ້ອຳນາດການປົກຄອງເມືອງ.

ບົດບັນທຶກຄວາມເຂົ້າໃຈສະບັບນີ້ແມ່ນເປັນສະບັບທຳອິດ.ຫາກມີຄວາມຈຳເປັນກໍ່ສາມາດກວດແກ້ແລະປັບປຸງຄືນໃໝ່ໃນຕໍ່ໜ້າ. ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກອງທຶນຫລຸດຜ່ອນຄວາມທຸກຍາກ ໄດ້ຕົກລົງເຊັນສັນຍາຮ່ວມກັນ ແນໃສ່ເຮັດໃຫ້ການຮ່ວມມື ແລະ ປະສານງານກັນ ໃນລະດັບຕ່າງໆ ນັບແຕ່ຂັ້ນສູນກາງ ລົງຮອດຂັ້ນແຂວງ ແລະ ຂັ້ນເມືອງ ມີຄວາມຍືນຍົງຕະລອດໄປ. ຂໍ້ຕົກລົງສະບັບມີຜົນສັກສິດ ນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ..

ນະຄອນຫລວງວຽງຈັນ, ວັນທີ 5 ສິງຫາ 2011

ທ່ານ ບຸນມາ ສົມມະວົງ
ຮອງຫົວໜ້າ ກົມຂົວທາງ
ກະຊວງໂຍທາທິການ ແລະ ຂົນສົ່ງ.

ດຣ ບຸນກ້ວາງ ສຸວັນນະພັນ
ວ່າການຜູ້ອຳນວຍການ ບໍລິຫານ ທລຍ

ທ່ານ ກອງແກ້ວ ວິງປະເສີດ
ຫົວໜ້າ ຫ້ອງການຄະນະຊີ້ນຳພັດທະນາຊົນນະບົດ
ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ